## ມິຊຊາອາທິດທີ 33 ກຳນົດທຳມະດາ
## ວັນທີ 12 ພະຈິກ 2022



**ພຣະວໍລະສານໂດຍນັກບຸນລູກາ 21, 5-11**

ໃນເວລານັ້ນ, ມີບາງຄົນທູນພຣະອົງເຖິງເລື່ອງພຣະວິຫານວ່າປະດັບປະດາດ້ວຍແຜ່ນຫີນອັນງົດງາມແລະມີສິ່ງຂອງຖະຫວາຍແກ້ບະບົນຕ່າງໆ. ພຣະອົງຈຶ່ງກ່າວວ່າ: ທຸກສິ່ງທີ່ພວກເຈົ້າເຫັນແລະຊົມຢູ່ນີ້ສັກວັນໜຶ່ງຈະບໍ່ມີຫຍັງເຫລືອ, ກ້ອນຫີນຊ້ອນກັນກໍຈະບໍ່ມີເລີຍ, ທຸກສິ່ງຈະເພພັງລົງໝົດ. ພວກສາວົກຈຶ່ງທູນຖາມພຣະອົງວ່າ: ພຣະອາຈານເອີຍ, ເຫດການເຫລົ່ານັ້ນຈະເປັນມາເວລາໃດ? ຈະມີເຄື່ອງໝາຍອັນໃດບອກໃຫ້ຮູ້ວ່າເຫດການນັ້ນໃກ້ເຂົ້າມາແລ້ວ?

ພຣະອົງກ່າວຕອບວ່າ: ຈົ່ງລະວັງຢ່າໃຫ້ຜູ້ໃດມາຕົວະຫລອກພວກເຈົ້າ. ຍ້ອນວ່າຈະມີຄົນເປັນອັນມາກມາໃນນາມຂອງເຮົາແລະອ້າງຕົວວ່າ: ແມ່ນເຮົານີ້ແລ ແລະວັນເວລາໃກ້ເຂົ້າມາແລ້ວ. ພວກເຈົ້າຢ່າເຊື່ອຕາມຄວາມເວົ້າຂອງພວກເຂົາ. ເມື່ອພວກເຈົ້າໄດ້ຍິນເສິກທາງເໜືອ ເສືອທາງໃຕ້ແລະການປະຕິວັດຕ່າງໆ ກໍຢ່າຕົກໃຈ. ສິ່ງເຫລົ່ານີ້ຈະຕ້ອງເກີດມາກ່ອນ, ແຕ່ວ່າວາລະສຸດທ້າຍຍັງບໍ່ທັນມາຮອດດອກ. ແລ້ວພຣະອົງກ່າວຕໍ່ໄປວ່າ: ຈະມີການຂັດສູ້ກັນລະຫວ່າງຊາດກັບຊາດ, ອານາຈັກກັບອານາຈັກ. ຈະເກີດແຜ່ນດິນສະເທືອນຢ່າງແຮງ. ຈະມີໂລກພະຍາດລະບາດແລະການອຶດຢາກຢູ່ທົ່ວທຸກແຫ່ງ. ຈະເກີດມີສິ່ງແປກປະຫລາດທີ່ເປັນຕາຢ້ານແລະມີເຄື່ອງໝາຍອັນຍິ່ງໃຫຍ່ໃນທ້ອງຟ້າ.

ແຕ່ກ່ອນອື່ນ, ເຂົາຈະຈັບກຸມແລະບຽດບຽນຂົ່ມເຫັງພວກເຈົ້າ. ຈະມອບພວກເຈົ້າໃຫ້ໂຮງທັມແລະໃສ່ຄຸກພວກເຈົ້າ. ເຂົາຈະຟ້ອງຫາພວກເຈົ້າຕໍ່ໜ້າບັນດາກະສັດແລະຜູ້ປົກຄອງທັງຫລາຍຍ້ອນນາມຂອງເຮົາ. ສິ່ງເຫລົ່ານີ້ຈະເປັນໂອກາດໃຫ້ພວກເຈົ້າໄດ້ເປັນພິຍານຢັ້ງຢືນເຖິງເຮົາ. ພວກເຈົ້າຈົ່ງຈຳໃສ່ໃຈໃຫ້ດີວ່າ ພວກເຈົ້າບໍ່ຕ້ອງຕຽມຄຳຕອບໂຕ້ເພື່ອປ້ອງກັນຕົວເລີຍ. ຍ້ອນວ່າເຮົາເອງຈະເປັນຜູ້ໃຫ້ຄຳເວົ້າແລະຄວາມສະຫລາດແກ່ພວກເຈົ້າ ຈົນວ່າບໍ່ມີສັດຕູຄົນໃດຈະສາມາດຕໍ່ສູ້ຫລືຄັດຄ້ານໄດ້. ພໍ່ແມ່, ອ້າຍນ້ອງ, ຍາດພີ່ນ້ອງແລະມິດສະຫາຍຈະສົ່ງມອບຂາຍພວກເຈົ້າ. ເຂົາຈະຂ້າຫລາຍຄົນໃນພວກເຈົ້າ. ຄົນທັງຫລາຍຈະຄຽດຊັງພວກເຈົ້າຍ້ອນນາມຂອງເຮົາ. ແຕ່ວ່າຜົມຢູ່ເທິງຫົວຂອງພວກເຈົ້າຈະບໍ່ຫລົ່ນເສຍໄປໄດ້ແມ່ນແຕ່ເສັ້ນດຽວ. ພວກເຈົ້າຈະເອົາຊີວິດຮອດໄດ້ ກໍດ້ວຍອາໄສຄວາມອົດທົນຂອງພວກເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ພວກເຮົາກຳລັງຫຍັບເຂົ້າໃກ້ທ້າຍປີພິທີກຳ, ວາຈາພຣະເຈົ້າຈຶ່ງເຊື້ອເຊີນພວກເຮົາໃຫ້ລຳເພິງເຖິງບັ້ນທ້າຍຊີວິດຂອງພວກເຮົາແຕ່ລະຄົນ ອັນເປັນຊ່ວງເວລາທີ່ພຣະອົງຈະສະເດັດກັບມາອີກຄັ້ງເພື່ອຕັດສິນຜູ້ເປັນແລະຜູ້ຕາຍ. ແຕ່ວັນເວລາທີ່ພຣະອົງຈະສະເດັດມານັ້ນພວກເຮົາບໍ່ຮູ້ຈັກ. ດ້ວຍເຫດນີ້, ສິ່ງທີ່ພວກເຮົາຕ້ອງກະທຳຄືຕ້ອງໝັ້ນຄົງໃນຄວາມເຊື່ອຢູ່ສະເໝີ ແລະສືບຕໍ່ຊີວິດການເປັນພິຍານເຖິງພຣະເຢຊູເຈົ້າໃນຊີວິດຂອງພວກເຮົາ. ແນ່ນອນ, ການເປັນພິຍານເຖິງພຣະອົງນັ້ນບໍ່ແມ່ນສິ່ງງ່າຍດາຍ. ພວກເຮົາຕ້ອງພົບກັບຄວາມຫຍຸ້ງຍາກ, ການຖືກກ່າວຫາແລະການບັງບຽດຕ່າງໆນາໆຍ້ອນພຣະນາມຂອງພຣະອົງ. ເໝືອນດັ່ງທີ່ພຣະເຢຊູເຈົ້າຜູ້ເປັນອາຈານຂອງພວກເຮົາໄດ້ຮັບກ່ອນນັ້ນແລ້ວ. ແຕ່ພວກເຮົາຈຶ່ງເຊື່ອໝັ້ນວ່າບໍ່ມີໄພອັນຕະລາຍໃດສາມາດທຳຮ້າຍພວກເຮົາໄດ້. ຍ້ອນພຣະເຈົ້າຈະຢູ່ນຳພວກເຮົາແລະຈະປ້ອງກັນພວກເຮົາໃຫ້ພົ້ນຈາກໄພອັນຕະລາຍທັງສິ້ນ.

ດັ່ງດຽວກັນ, ກ່ອນວັນສຸດທ້າຍຈະມາເຖິງ, ຈະມີໄພພິບັດ, ພະຍາດລະບາດ, ແຜ່ນດິນໄຫວແລະສົງຄາມແລະໄພອັນຕະລາຍທັງຫລາຍ, ແຕ່ຖ້າພວກເຮົາສັດຊື່ແລະໝັ້ນຄົງຕໍ່ພຣະເຈົ້າໃນຄວາມເຊື່ອແລ້ວ, ສິ່ງຮ້າຍທັງຫລາຍນັ້ນກໍບໍ່ສາມາດທຳຮ້າຍພວກເຮົາໄດ້. ເພາະພຣະເຈົ້າຈະປົກປັກຮັກສາພວກເຮົາໃຫ້ພົ້ນຈາກອັນຕະຫລາຍເຫລົ່ານັ້ນ. ແຕ່ເມື່ອພວກເຮົາພົບກັບໄພພິບັດຕ່າງໆນາໆນັ້ນ, ພວກເຮົາຈະສືບຕໍ່ໄວ້ໃຈແລະເຊື່ອໃນພຣະເຈົ້າບໍ? ພວກເຮົາຈະໝັ້ນຄົງໃນຄຳພາວະນາບໍ? ພວກເຮົາຈະບໍ່ແລ່ນຫາພຣະເທັດທຽມອື່ນບໍ? ຄຳຖາມເຫລົ່ານີ້ເປັນສິ່ງທ້າທາຍໃນຊີວິດຄວາມເຊື່ອຂອງພວກເຮົາແຕ່ລະວັນ.

ຂໍໃຫ້ວາຈາພຣະເຈົ້າໃນວັນອາທິດທີ 33 ນີ້ຊ່ວຍພວກເຮົາໃຫ້ຕື່ນເຝົ້າແລະມີສະຕິຢູ່ສະເໝີໃນການດຳລົງຊີວິດຄວາມເຊື່ອຂອງພວກເຮົາແຕ່ລະວັນ. ເພື່ອວ່າວັນເວລາທີ່ພຣະເຈົ້າຈະສະເດັດກັບມາອີກຄັ້ງນັ້ນຈະບໍ່ເປັນສິ່ງຢ້ານກົວສຳລັບພວກເຮົາ. ແຕ່ຈະເປັນວັນແຫ່ງຄວາມຍິນດີ. ເພາະພວກເຮົາຈະໄດ້ໄປພົບພຣະອົງຜູ້ຊົງຮັກແລະຊ່ວຍກູ້ພວກເຮົາໃຫ້ຮອດ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດສະຖິດຢູ່ນຳລູກແລະຊ່ວຍລູກໃຫ້ກຽມພ້ອມແລະມີສະຕິຢູ່ສະເໝີໃນການຕ້ອນຮັບພຣະອົງຜູ້ຈະສະເດັດກັບມາອີກຄັ້ງໃນສີນຸງຄຸນຮຸ່ງເຮືອງຂອງພຣະອົງ. ເພື່ອພຣະອົງຈະໄດ້ຕ້ອນຮັບລູກເຂົ້າສູ່ພຣະລາໄຊຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ